ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ສັບບທີ ໔໐໕ ປພຖຊ/ ໑໔໔໐໐໗**

# ບົດຄວາມ

## ສັນຕິວິທີ ເຂົ້າຢືນຢູ່ປະຕູບ້ານ ສປປລາວ.

ນະໂຍບາຍແກ້ໄຂບັນຫາລາວ ຕາມແນວທາງສັນຕິວິທີ ພາຍໃຕ້ການນຳພາ ຂອງພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກ້າວເຂົ້າມາຢືນຢູ່ຕໍ່ໜ້າປະຕູບ້ານ ຂອງ ພັກ ຣັດວຽງຈັນໄດ້ຢ່າງສງ່າອົງອາດທີ່ສຸດ! ຍ້ອນທ່ານ ບົວສອນ ບຸບຜາວັນ ນາຍົກຣັຖມົນຕຣີ ສປປ ລາວ. ໄດ້ປະກາດ ຢູ່ ສິງກະໂປ ຢ່າງຈະແຈ້ງວ່າ " ເປົ້າໝາຍຂອງລາວ ແມ່ນເລັ່ງສ້າງພລັງງານ ໄຟຟ້ານ້ຳຕົກ.. ແຕ່ບໍ່ແມ່ນສ້າງປະຊາທິປະໄຕ" (Reuter 11/18/07) ຢູ່ປະເທດລາວ ບໍ່ມີປະຊາ ທິປະໄຕ...ມີແຕ່ສັງຄົມນິຍົມ ຄອມມິວນິສ ຢ່າງດຽວ. (VOA. 11/21/07).

ການປະກາດທ່າທີການເມືອງ ຢ່າງຈະແຈ້ງ ຂອງທ່ານ ບົວສອນ ບຸບຜາວັນ ເດີນໜ້າສ້າງສັນ ຄົມນິຍົມຄອມມິວນິສອີກຕໍ່ໄປ, ທັງໆທີ່ປະເທດຈີນ ມີປະຊາກອນ ຫລາຍກວ່າ ພັນລ້ານຄົນ ກໍຍັງ ໄຂເສັ້ນທາງ ໄປສູ່ການພັທນາປະຊາທິປະໄຕໃນຊາດຂອງເຂົາ.

ສັ້ນ, ການອອກມາປະກາດ ທ່າທີການເມືອງ ໂດຍມີກຸ່ມປະເທດເອຊຽນແລະຊາວໂລກເປັນ ສັກຂີພະຍານດັ່ງນີ້, ຖືວ່າ ເປັນໄຊຊນະອັນໃຫຍ່ຫລວງ. ມັນໄດ້ເຮັດໃຫ້ ບົດບາດທາງການເມືອງ ຂອງພັກຣັດວຽງຈັນ ຕົກເຂົ້າຢູ່ໃນວົງລ້ອມ ຂອງນະໂຍບາຍຕໍ່ສູ້ ແກ້ໄຂບັນຫາລາວ ຢ່າງສັນຕິ ຕາມແຜນຍຸທສາດປ້ອງບັນຫາລາວ ເຂົ້າສູ່ເວທີສາກົນ ໄດ້ສຳເຣັດຜົນ ຕາມເປົ້າຫມາຍ.

ການປົກປ້ອງອຳນາດຜເດັດການ ແລະກໍ່ສ້າງສັງຄົມນິຍົມຄອມມິວນິສ, ພັກຣັດ ໄດ້ປະຕິບັດ ຍຸທະວິທີ ແບ່ງຣັບແບ່ງສູ້ ປະເພດສລາດແກມໂກງ, ສວຍໃຊ້ກົດຫມາຍ ຣັຖທັມນູນເປັນຂໍ້ອ້າງ ຕໍ່ລອງ ຍາດແຍ່ງເອົາການຊ່ວຍເຫລືອ ຈະອົງການຈັດຕັ້ງສາກົນ, ຮຽກຮ້ອງ ໃຫ້ຕ່າງຊາດ ເຂົ້າມາ

ລັງທຶນ ເພື່ອລ້ຽງປາກລ້ຽງທ້ອງ ແລະກໍ່ສ້າງສັງຄົມນິຍົມ ໃຫ້ພວກຕົນ.

ເມື່ອຖືກຊາວໂລກ ກ່າວປະນາມ ໃນການລະເມີດ ຕໍ່ສິດທິມະນຸດ, ການສໍ້ຣາດບັງຫລວງ, ການຄ້າມະນຸດ, ຄ້າຢາເສບຕິດ, ຄ້າໄມ້ເຖື່ອນ, ທໍາລາຍສະພາບແວດລ້ອມ, ພັກຣັດກໍເອົາກົດໝາຍ ຣັຖທັມມນູນ, ແລະ ເອົາກົດໝາຍ ທີ່ທາງສະພາຣັບຜ່ານຕ່າງໆນາໆນັ້ນ ມາເປັນສາກບັງໜ້າ ຫລອກລວງປະຊາຊົນ ແລະຊາວໂລກ ໃຫ້ເຂົ້າໃຈວ່າ **"ເມືອງລາວ ໄດ້ປ່ຽນແປງ ມາເປັນເສຣີໄປໃນຕົວ".**

ທຸກຄົນກໍຮູ້ດີ... ເຖິງແມ່ນວ່າ ພັກຣັດ ຈະຫລອກ! ກໍຕັ້ງໃຈໃຫ້ຫລອກ!.. ແຕ່ໃນເມື່ອບັນຫາລາວນີ້, ມັນຄວນແກ້ກັນມາ ແຕ່ດົນນານແລ້ວ! ເປັນຫຍັງ ມັນຈຶ່ງບໍ່ແລ້ວຈັກເທື່ອ... ແມ່ນໃຜ ເປັນຜູ້ຂັດຂວາງ?...ດັ່ງນັ້ນ, ອົງການຈັດຕັ້ງສາກົນຕ່າງໆ ຈຶ່ງບີບຣັດໃຫ້ພັກຣັດ ວຽງຈັນ **ຕ້ອງປະກາດທ່າທີ ການເມືອງຂອງຕົນ ອອກມາ ຢ່າງລະອຽດ, ຈະແຈ້ງ ແລະຊັດເຈນ.**

ໃນເມື່ອ ທ່ານ ບົວສອນ ບຸບຜາວັນ "ນົກນ້ອຍ ບໍ່ຈັກຕັງ!" ກໍອອກມາປະກາດທ່າທີທາງການເມືອງ "ເດີນໜ້າ ສ້າງສັງຄົມນິຍົມຄອມມິວນິສຢ່າງດຽວ ໃນລາວ ດັ່ງນີ້, ມັນກໍເຮັດໃຫ້ການແກ້ໄຂບັນຫາຂອງລາວ ກະໂດດຂັ້ນ..ເພາະມັນ ບໍ່ຕ່າງຫຍັງ ກັບຄົນປ່ວຍ ທີ່ຍອມບອກຄວາມຈິງ ຂອງພຍາດ ທີ່ມີຢູ່ໃນຕົວ ໃຫ້ນາຍແພດໄດ້ຮູ້ຢ່າງລະອຽດ. ແພດ ກໍສາມາດ ໃສ່ຢາໃຫ້ຖືກກັບພຍາດໄດ້. ພຍາດສນິດໃດ ຄວນຈະໃຊ້ຢາກິນ ຫລືຢາສັກ ແລະ ພຍາດຊນິດໃດຄວນຈະຜ່າຕັດ... ຈຶ່ງຈະເຮັດໃຫ້ຫາຍເປັນປົກກະຕິໄດ້. ແພດ ກໍບໍ່ລໍຊ້າ, ເອົາເຂົ້າຫ້ອງຜ່າຕັດ ເພື່ອຊ່ວຍເອົາຊີວິດ ຂອງຜູ້ປ່ວຍນັ້ນໄວ້.

ເຖິງແມ່ນວ່າ ພັກຣັດວຽງຈັນ ຈະໃຊ້ ທຸກແຜນຍຸທສາດ ໃນການປົກປ້ອງອໍານາດຜເດັດການໄວ້ໃຫ້ໝັ້ນຄົງ, ດ້ວຍການສະກັດກັ້ນ, ປາບປາມ ແລະ ດັບສູນ ພວກເຮົາປະຊາຊົນພັກແລະກໍາລັງທັບເສຣີປະຊາທິປະໄຕລາວ ແລະ ຕົວະຍົວະຫລອກລວງປະຊາຊົນ, ຫລອກລວງຊາວໂລກ ໃນຫລາຍຮູບແບບປານໃດກໍຕາມ... ສຸດທ້າຍ ກໍຕ້ອງອອກມາຍອມຮັບ ທາດແທ້ຄວາມເປັນຈິງ ຂອງຕົນ ໃຫ້ໂລກຮູ້.. ກາຍເປັນການ ຕົກເຂົ້າບ້ວງ ຂອງນະໂຍບາຍ ແກ້ໄຂບັນຫາລາວແບບສັນຕິວິທີຢ່າງບໍ່ຮູ້ສຶກຕົວ. ທັງນີ້, ກໍເພາະນະໂຍບາຍສັນຕິວິທີ ເປັນນະໂຍບາຍ ທີ່ທົ່ວໂລກຍອມຮັບ. ເປັນນະໂຍບາຍ ທີ່ອ່ອນໂຍນ ນິ້ມນວນ ແຕ່ມີຄວາມເດັດຂາດພາຍໃນຕົວຂອງມັນ. ຈາກບ່ອນດຶງເອົາອໍານາດຜເດັດການ ອອກຈາກພັກຣັດ, ດ້ວຍການກໍານົດສິດ ແລະໜ້າທີ່ ຂອງຜູ້ນໍາຕາມກົດໝາຍ ຣັຖທັມມນູນ ໃຫ້ມີຄວາມກໍ້າເກິ່ງກັນ ກັບສິດທິເສຣີພາບຂອງປະຊາຊົນລາວ ໄປເທື່ອລະກ້າວ.

ຈາກນັ້ນ, ກໍປ້ອງບັນຫາລາວ ເຂົ້າສູ່ເວທີສາກົນ ໃນຮູບແບບ ຊຸກຍູ້ໃຫ້ລາວ ໄດ້ເຂົ້າເປັນສາມະຊິກສະມາຄົມອາຊຽນ ແລະດຽວນີ້, ທົ່ວໂລກໄດ້ຮັບຮູ້ທ່າທີການເມືອງຂອງລາວ ຢ່າງຈະແຈ້ງ ຕາມທີ່ນາຍົກບົວສອນ ໄດ້ຖແລງອອກ ຢູ່ປະເທດ ສິງກະໂປນັ້ນ. ແລ້ວອັນນີ້, ຄືບັ້ນ ອາວະສານຂອງຄວາມເປັນຜເດັດການຢູ່ໃນລາວ!!!.

ພວກເຮົາ ປະຊາຊົນພັກ ແລະກໍາລັງທັບ ເສຣີປະຊາທິປະໄຕລາວ, ຮຽກຮ້ອງມາຍັງ ອົງການ

ຈັດຕັ້ງສາກົນ, ບັນດາປະເທດມະຫາອຳນາດ, ປະເທດຍຸທສາດ ໃນການ ແກ້ໄຂບັນຫາລາວ, ສະມາຄົມເອຊຽນ, ຕລາດຮ່ວມຢູຣົບ ແລະສະຖາບັນການເງິນຕ່າງໆໃນໂລກ ຈຶ່ງໄດ້ຫັນໜ້າເຂົ້າມາສົນໃຈ ໃນບັນຫາລາວ, ບີບຣັດ ໃຫ້ພັກຣັດວຽງຈັນ ຕ້ອງຢຸດຕິ ການກະທຳຕ່າງໆ ທີ່ມີລັກສນະຜເດັດການ ຂາຍຊາດ, ຂາຍປະຊາຊົນ ແລະຕ້ານສາກົນ. ບີບຣັດໃຫ້ພັກຣັດ ຕ້ອງປ່ຽນຣັຖບານໂດຍໄວ.... ມີບັນຫາ ກັບຜູ້ໃດ ກໍໃຫ້ໄປລົມກັບຜູ້ນັ້ນ, ເພື່ອພ້ອມກັນແກ້ໄຂບັນຫາລາວນີ້ ໃຫ້ສຳເຣັດລົງໂດຍໄວ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໒໐ ທັນວາ ໒໐໐໗.**